ຜ-ຟຟລ ເຂື່ອນໄຟຟ້ານ້ຳງື່ມ 1 ຈັດກິດຈະກຳ ປະຊາສຳພັນ ວຽກງານສິ່ງແວດລ້ອມ ແລະ ສັງຄົມ

ໃນວັນທີ 03 ພະຈິກ 2016, ຜ-ຟຟລ ກໍ່ຄື ເຂື່ອນໄຟຟ້ານ້ຳງື່ມ1 ໄດ້ລົງຈັດກິດຈະກຳຮ່ວມກັບ ນ້ອງໆນັກຮຽນ ທີ່ ໂຮງຮຽນ ມັດທະຍົມສົມບູນ ໂພນໝີ, ເມືອງວຽງຄຳ ແຂວງວຽງຈັນ. ຈຸດປະສົງ ເພື່ອເປັນການປຸກຈິດສຳນຶກ ໃຫ້ກັບບັນດານັກຮຽນ ໃຫ້ເຂົ້າໃຈເພີ່ມຂຶ້ນກ່ຽວກັບການດຳເນີນທຸລະກິດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ໃຫ້ເຫັນເຖິງຄວາມສຳຄັນກ່ຽວກັບການອະນຸລັກ ຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ.ໃນກິດຈະກຳດັ່ງກ່າວ ເຂື່ອນໄຟຟ້ານ້ຳງື່ມ 1 ກໍ່ໄດ້ມອບ ຖັງຂີ້ເຫຍື້ອ ພ້ອມດ້ວຍອຸປະກອນການສຶກສາຈຳນວນໜຶ່ງໃຫ້ກັບ ໂຮງຮຽນດັ່ງກ່າວ.